ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

*****************************

ອົງການໄອຍະການປະຊາຊົນສູງສຸດ

ເລກທີ 01 /ອອປສ

ນະຄອນຫຼວງວຽງຈັນ, ວັນທີ 18/11/08

# ຄໍາສັ່ງ

ເຖິງ : ບັນດາຫົວໜ້າກົມ, ຫ້ອງການ ອອປສ.

ເລື່ອງ : ປະຕິບັດການທົດລອງຕິດຕາມການຈໍລະຈອນເອກະສານກ່ຽວກັບຄະດີ ແບບຄົບວົງຈອນ.

ອີງຕາມ ການຕົກລົງຂອງກອງປະຊຸມຮ່ວມ ລະຫວ່າງ ຄະນະນໍາ ອອປສ ກັບບັນດາຫົວໜ້າກົມ, ຫົວໜ້າຫ້ອງການ, ໄອຍະການປະຊາຊົນຂັ້ນອຸທອນພາກກາງ, ໄອຍະການປະຊາຊົນນະຄອນຫຼວງວຽງຈັນ ຄັ້ງວັນທີ 22 ຕຸລາ 2008.

ໄອຍະການປະຊາຊົນສູງສຸດ ຕົກລົງໃຫ້ຈັດຕັ້ງປະຕິບັດດ້ວຍຈິດໃຈເນື້ອໃນດັ່ງລຸ່ມນີ້ :

1./ ການຕິດຕາມການຈໍລະຈອນເອກະສານກ່ຽວກັບຄະດີແບບຄົບວົງຈອນ ໃຫ້ເລີ່ມປະຕິບັດທົດລອງຢູ່ສາມກົມ ຂອງອົງການໄອຍະການປະຊາຊົນສູງສຸດ ຄື : ກົມກວດກາທົ່ວໄປ, ກົມກວດກາຄະດີແພ່ງ ແລະ ກົມກວດກາຄະດີອາຍາ ;

2./ ເພື່ອໃຫ້ເອກະສານເຂົ້າສູ່ວົງຈອນຂອງການຕິດຕາມ, ທຸກໆເອກະສານກ່ຽວກັບຄະດີທີ່ຈະມອບໃຫ້ສາມກົມ ຕ້ອງຜ່ານຂັ້ນຕອນການຈໍລະຈອນເອກະສານແບບຄົບວົງຈອນ ຕາມໃບຕິດຕາມກໍານົດໄວ້. ທຸກພາກສ່ວນທີ່ມີໜ້າທີ່ແກ້ໄຂຄະດີ ຕ້ອງໄດ້ປະຕິບັດຕາມຂັ້ນຕອນຢ່າງເຂັ້ມງວດ ;

3./ ໃຫ້ຫົວໜ້າຫ້ອງການສ້າງຮ່າງໃບຕິດຕາມການຈໍລະຈອນເອກະສານ ກ່ຽວກັບຄະດີແບບຄົບວົງຈອນ, ແລ້ວເຊີນບັນດາຫົວໜ້າກົມມາປຶກສາ ແລະ ຕົກລົງກັນ ; ໃຫ້ເຂົ້າໃຈວ່າເປັນການທົດລອງ ເພື່ອຊອກວິທີການທີ່ດີໃນຂັ້ນຕໍ່ໄປ ;

4./ ກໍານົດເວລາປະຕິບັດໃຫ້ເລີ່ມແຕ່ທ້າຍເດືອນ 11/2008 ໃຫ້ສໍາເລັດການສ້າງຮ່າງໃບຕິດຕາມ, ປະຊຸມເພື່ອຕົກລົງເອກະພາບຂອງບັນດາຫົວໜ້າກົມ ໂດຍສະເພາະແມ່ນສາມກົມ ກັບ ຫົວໜ້າຫ້ອງການ. ວັນທີ 01 ທັນວາ 2008 ໃຫ້ເລີ່ມປະຕິບັດ. ຖ້າບໍ່ມີບັນຫາຫຍຸ້ງຍາກ ໃຫ້ດໍາເນີນໄປໃນໄລຍະ 3 ເດືອນ ຈຶ່ງໃຫ້ສະຫລຸບປະເມີນຜົນ, ຖ້າມີຄວາມຫຍຸ້ງຍາກຢູ່ກົມໃດ ຂອດໃດ ກໍໃຫ້ລາຍງານເພື່ອຊອກວິທີທາງແກ້ໄຂ ;

5./ ວຽກງານດັ່ງກ່າວມອບໃຫ້ຫົວໜ້າຫ້ອງການ ອອປສ ເປັນຜູ້ຊີ້ນໍາ, ສ່ວນຜູ້ຮັບຜິດຊອບໂດຍກົງນັ້ນ ຫົວໜ້າຫ້ອງການຈະມອບໃຫ້ພະແນກ ຫຼື ບຸກຄົນ, ໃຫ້ຫົວໜ້າຫ້ອງການເປັນຜູ້ອອກແຕ່ງຕັ້ງ ແລ້ວແຈ້ງໃຫ້ຄະນະນໍາ ແລະ ທຸກໆກົມຮັບຊາບ.

ເມື່ອໄດ້ຮັບຄໍາສັ່ງແລ້ວ ຈົ່ງປະຕິບັດຢ່າງເຂັ້ມງວດ.

ໄອຍະການປະຊາຊົນສູງສຸດ

ສົມພັນ ແພງຄໍາມີ

<u>ບ່ອນສົ່ງ :</u>

- ຄະນະນໍາ ອອປສ ຜູ້ລະ 01 ສະບັບ ເພື່ອຊາບ
- ເກັບມ້ຽນສໍາເນົາ 02 ສະບັບ.

0042_Sb_